ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 23 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 ພຶດສະພາ 2016

ສຳນັກງານ ຄຄຊ
ເລກທີ 0518
ວັນທີ 01 JUN 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ

ທີ 16/05/2016 ຫາ 20/05/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກການສ້າງບ້ານໃໝ່ຂອງ ສ.ອາເມລິກາ ເພີ່ມຂຶ້ນ 6,6% ໃນເດືອນ 4/2016 ເມື່ອທຽບໃສ່ເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 13/05/2016 | ອາທິດນີ້ 20/05/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1358 | 1,1210 | 1,32% |
| ໂດລາ/ເຢນ | 108,77 | 110,11 | -1,22% |
| ໂດລາ/ບາດ | 35,40 | 35,65 | -0,72% |
| ໂດລາ/ເປໂຊ | 46,62 | 46,77 | -0,33% |
| ໂດລາ/ຣູເປັຍ | 13.310,00 | 13.584,11 | -2,02% |
| ໂດລາ/ໂດລາສິງກະໂປ | 1,3731 | 1,3793 | -0,45% |
| ໂດລາ/ຢວນ | 6,5194 | 6,5430 | -0,36% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 3,72% ຈາກ 48,25 ໂດລາ/ບາເຣວ ມາເປັນ 50,05 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງ ສ.ອາເມລິກາ ເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນສຳເລັດຮູບຂອງ ສ.ອາເມລິກາ ຫຼຸດລົງ 3,17

ລ້ານບາເຣວ ໃນອາທິດທີ 13/5/2016 ເມື່ອທຽບໃສ່ອາທິດຜ່ານມາ. ສຳລັບລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,28% ຈາກ 1.271,31 ມາເປັນ 1.254,98 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,22% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,11% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,73% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,26% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,37% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,77% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,42% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,78% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 13/05/2016 | | | ອາທິດນີ້ 20/05/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.097,93 | 8.126,85 | 8.104,85 | 8.110,78 | 8.138,94 | 8.122,49 | -0,16% | -0,15% | -0,22% |
| ບາດ | 229,41 | 231,08 | 230,93 | 227,95 | 229,52 | 229,26 | 0,64% | 0,68% | 0,73% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.114,92 | 8.144,40 | 8.129,66 | 8.123,20 | 8.154,70 | 8.138,95 | -0,10% | -0,13% | -0,11% |
| ບາດ | 230,48 | 232,11 | 231,30 | 229,76 | 231,62 | 230,69 | 0,31% | 0,21% | 0,26% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,21% | 0,22% | 0,31% | 0,15% | 0,19% | 0,20% | | | |
| ບາດ | 0,47% | 0,45% | 0,16% | 0,80% | 0,92% | 0,63% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,88% ທຽບໃສ່ວັນທີ 13/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,07%;
- ປະລິມານເງິນ M2 ຫຼຸດລົງ 0,17% ເມື່ອທຽບໃສ່ວັນທີ 13/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,40%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 16-20/05/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 34,81 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 72,81 ລ້ານໂດລາ ແລະ ຂາຍໂດລາໄດ້ 37,99 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 2.599,05 ລ້ານບາດ (ໃນນີ້ ຊື້ບາດໄດ້ 302,52 ລ້ານບາດ ແລະ ຂາຍບາດໄດ້ 2.901,57 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 0,55% ແລະ ເພີ່ມຂຶ້ນ 25,54% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 2,20 ລ້ານໂດລາ ແລະ ເງິນບາດມີຈຳນວນ 16 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 24,39 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 69 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,23 ລ້ານໂດລາ ແລະ ເງິນບາດບໍ່ມີການເຄື່ອນໄຫວຊື້-ຂາຍ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09-13/05/2016 | | ອາທິດທີ 16-20/05/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **67,64** | **308,95** | **72,81** | **302,52** | **7,64%** | **-2,08%** |
| - ທ/ຄທຸລະກິດລັດ | 14,44 | 140,53 | 14,54 | 114,27 | 0,66% | -18,68% |
| - ທ/ຄທຸລະກິດອື່ນໆ | 53,19 | 168,42 | 58,27 | 188,24 | 9,54% | 11,77% |
| **2. ການຂາຍເງິນຕາຕ່າງປະເທດ** | **42,56** | **2.243,30** | **37,99** | **2.901,57** | **-10,72%** | **29,34%** |
| - ທ/ຄທຸລະກິດລັດ | 15,97 | 168,05 | 17,67 | 226,06 | 10,61% | 34,52% |
| - ທ/ຄທຸລະກິດອື່ນໆ | 26,59 | 2.075,25 | 20,33 | 2.675,51 | -23,54% | 28,92% |
| **ຊື້-ຂາຍສຸດທິ ທທກ** | **25,08** | **-1.934,35** | **34,81** | **-2.599,05** | **38,80%** | **34,36%** |
| ຜົດດ່ຽງ ຊື້-ຂາຍ | 37,08% | -626,09% | 47,82% | -859,14% | | |
| ມູນຄ່າການຊື້-ຂາຍ | **110,19** | **2.552,26** | **110,80** | **3.204,09** | **0,55%** | **25,54%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-25,89** | **-53,00** | **-24,39** | **-69,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 25,89 | 53,00 | 24,39 | 69,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,80** | **14,80** | **2,20** | **16,00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,05** | **0,33** | **0,23** | **0,00** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,09 | 0,33 | 0,23 | 0,00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,04 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2016 ຢູ່ໃນລະດັບ 0,6% (ຕົວເລກຄາດຄະເນ) ຫຼຸດລົງ 0,36% ຈາກ 0,96% ໃນເດືອນ 04/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 108,33 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 27,6% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 995 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 10,55% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 867,56 ຕື້ກີບ ເພີ່ມຂຶ້ນ 35,54% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/05/2016) ມີຈໍານວນ 2.229 ຄັ້ງ ໂດຍມີມູນຄ່າ 1.154,04 ຕື້ກີບ ເພີ່ມຂຶ້ນ 313,50% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 636 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.144,28 ຈຸດ ຫຼຸດລົງ 0,63% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 208.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 956,85 ລ້ານກີບ ຫຼຸດລົງ 61,71% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 73,23% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.321 ກີບ/ຮຸ້ນ ເພີ່ມຂຶ້ນ 124 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 32.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 174,52 ລ້ານກີບ ຫຼຸດລົງ 46,86% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 35,12% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,28%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.670 ກີບ/ຮຸ້ນ ຫຼຸດລົງ 77 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 103.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 584,53 ລ້ານກີບ ຫຼຸດລົງ 71,78% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 62,64% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.000 ກີບ/ຮຸ້ນ ເພີ່ມຂຶ້ນ 1.100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,70 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດກວມເອົາ 50% ຂອງມູນຄູ່ຊື້-ຂາຍຮຸ້ນ LWPC. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.652 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 67.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 178,73 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 84,05% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 5.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 18,36 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄູ່ການຊື້-ຂາຍຂອງຮຸ້ນ SVN. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ປຶກສາຫາລືພາຍໃນ ກ່ຽວກັບຮ່າງບົດບັນທຶກກອງປະຊຸມເຈລະຈາ ລະຫວ່າງລັດຖະບານລາວ ແລະ ລັດຖະບານເຢຍລະມັນ ທີ່ ກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ, ❷ປຶກສາຫາລື ໃນຫົວຂໍ້: ນະວັດຕະກໍາ, ເຕັກໂນໂລຊີ ແລະ ວິທະຍາສາດ ເພື່ອການພັດທະນາທີ່ຍືນຍົງ ຄັ້ງທີ 72 ທີ່ ບາງກອກ ປະເທດໄທ, ❸ຖອດຖອນບົດຮຽນກ່ຽວກັບການເປັນເຈົ້າພາບຈັດກອງປະຊຸມຂັ້ນສູງວຽກງານຂອງຂະແໜງການ

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ທະນາຄານ ທີ່ ສທດ, ❹ສຳມະນາໃນຫົວຂໍ້: “MAS Banking Supervision Training Programe” ທີ່ປະເທດ ສິງກະໂປ ແລະ “Global Economic Environment and Currency market outlook” ທີ່ ທຫລ;

- ສຳເລັດການແຈ້ງການເພີ່ມທະວີເອົາໃຈໃສ່ຈັດຕັ້ງປະຕິບັດຍັດຕິ 2270 (2016) ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດຕໍ່ກັບການຂວໍ້າບາດປະເທດ ສປປ ເກົາຫຼີ ໃຫ້ແກ່ທະນາຄານທຸລະກິດ ແລະ ສາຖາບັນການເງິນຈຸນລະພາກທົ່ວປະເທດ;
- ສຳເລັດການຮ່ວມຮັບແຂກ ແລະ ເຮັດວຽກກັບທີ່ປຶກສາອາວຸໂສຈາກ ກະຊວງການເງິນຍີ່ປຸ່ນ ແລະ ຊ່ຽວຊານ IMF ທີ່ມາຢ້ຽມຢາມ ແລະ ເຮັດວຽກປຶກສາຫາລືກ່ຽວກັບໝາກຜົນຂອງທຶນການຊ່ວຍເຫຼືອລັດຖະບານຍີ່ປຸ່ນ;
- ສຳເລັດການຄົ້ນຄວ້າ ແລະ ແຈ້ງຕອບກະຊວງການຕ່າງປະເທດ ກ່ຽວກັບອົງການການເງິນສາກົນ (IFC) ມີຄວາມຕ້ອງການທີ່ຈະລົງທຶນຮ່ວມກັບທະນາຄານລາວ-ຝຣັ່ງ ຈຳກັດ;
- ສຳເລັດການຈັດກອງປະຊຸມ: ❶ປຶກສາຫາລື ແລກປ່ຽນບົດຮຽນ ວຽກງານປະຊາສຶກສາທາງດ້ານການເງິນ ຂອງໂຄງການ MRA-AFP ຮ່ວມກັບບັນດາອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ກ່ຽວກັບປະສານງານດ້ານກິດຈະກຳ ແລະ ປຶກສາຫາລືຕໍ່ກັບວຽກງານປະຊາສຶກສາທາງດ້ານການເງິນໃນອານາຄົດ, ❷ຜ່ານຮ່າງຍຸດທະສາດການບໍລິການການເງິນທີ່ຫຼາກຫຼາຍ ແລະ ທົ່ວເຖິງ ຢູ່ ທຫລ ພາກເໜືອ ແຂວງຫຼວງພະບາງ ແລະ ທຫລ ພາກໃຕ້ ແຂວງຈຳປະສັກ, ❸ເຜີຍແຜ່ດຳລັດ ແລະ ບົດແນະນຳວ່າດ້ວຍ ການແຈ້ງຊັບສິນ ແລະ ລາຍຮັບແກ່ພະນັກງານ ທຫລ ຜູ້ທີ່ຍັງບໍ່ທັນແຈ້ງຊັບສິນໃນໄລຍະຜ່ານມາ (ພະນັກງານສົມບູນໃໝ່ ແລະ ພະນັກງານທີ່ສຳເລັດການສຶກສາ);
- ສຳເລັດການສຳພາດຜູ້ອຳນວຍການໃຫຍ່ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ເພື່ອປະກອບເຂົ້າໃນລາຍການໂທລະພາບ “ເສັ້ນທາງສູ່ຕະຫຼາດທຶນລາວ”.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າບົດແນະນຳມາດຕະຖານສາກົນດ້ານການບັນຊີ IAS18 ລາຍຮັບ, IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ, ❹ສືບຕໍ່ຄົ້ນຄວ້າການແຍກສູນຮັບຝາກຫຼັກຊັບ ອອກຈາກຕະຫຼາດຫຼັກຊັບລາວ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ພາສີ ພິມມະກອນ**